# ໂຮງຮຽນວັນອາທິດ

**ວັນອາທິດ ທີ 22 ພຶສຈິກາ 2009** (11-22-2009)

## ຈົ່ງລະມັດລະວັງໃນການເວົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ຢາໂກໂບ:3:1-18.

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ທ່ານຈະຖືກຮຽກຮ້ອງໃຫ້ຍິນຍອມໃຫ້ພຣະເຈົ້າຊົງນໍາພາໃນການປາກເວົ້າຂອງທ່ານໂດຍການໃຊ້ເວລາໃນພຣະທັມຄໍາສອນຂອງພຣະເຈົ້າຈົນໄປເຖິງຄວາມເຂົ້າໃຈໃນພຣະສະຕິປັນຍາຂອງພຣະອົງ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ພວກເຮົາເວົ້າຢ່າງໃດທີ່ເປັນຜົນເສັຽຫາຍອັນສໍາຄັນໃນຊີວິດ. ຖ້າເຮົາຫາກຝຶກແອບທີ່ຈະຂອບຄຸມໃນການເວົ້າຂອງເຮົາ, ເຮົາກໍຈະໆເຮີນເຕີບໂຕເປັນຜູ້ໃຫຍ່ເຕັມທີ່ໃນຊີວິດຂອງເຮົາ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສໍາຄັນ:**

ການໃຊ້ຄໍາເວົ້າທີ່ໄຮ້ເຫດຜົນຈະເປັນຜົນກະທົບທີ່ບໍ່ດີຕໍ່ຄອບຄົວແລະຊີວິດຄຣິສຕຽນຂອງເຮົາ. ບົດຮຽນນີ້ໄດ້ເຕືອນສະຕິເຮົາວ່າຄໍາເວົ້າທີ່ມາຈາກປາກກໍແມ່ນອອກມາຈາກມັນສມອງ, ຊຶ່ງມີຄວາມໝາຍວ່າຄໍາເວົ້າທີ່ດີ ຖືກຕ້ອງແມ່ນອອກມາຈາກຄວາມຄຶດທີ່ດີ.

ຄໍາເວົ້າສາມາດມີພະລັງອໍານາດໃນທາງດີແລະກົງກັນຂ້າມ. ນາຊີ ຜູ້ອອກຄໍາສັ່ງຂອງເຢັຽຣະມັນນີ, ເອ ດອຟ ຮິດເລີ້, ແມ່ນຜູ້ນຶ່ງທີ່ມີຊື່ສຽງໃນອໍານາດການເວົ້າ. ການເວົ້າເຖິງການຈໍາແນກຜິວພັນຂອງລາວແລະຄວາມປາເຖື່ອນໃນປື້ມຫຼັກການໆເມືອງ, ມາຍ ແຄຟ, ຜັກດັນໃຫ້ທະຫານເຢັຽຣະມັນນີເຂົ້າສົງຄາມໂລກໃນເວລານັ້ນເປັນເຫດໃຫ້ຫຼາຍຄົນເສັຽຊີວິດເຖິງ 72 ລ້ານຄົນ ເພາະວ່າທຸກໆໜ້າໜັງສືຂອງ 720 ໜ້າເປັນຄໍາປະກາດຂອງ ມາຍ ແຄຟ, ຄິດສະເລັ່ຽປະມານ 100,000 ຄົນໄດ້ຕາຍໃນສົງຄາມໂລກຄັ້ງທີສອງ. ອັນໃດເປັນຄ່າຕອບແທນທີ່ໜ້າຢ້ານກົວຂອງຄໍາເວົ້າທີ່ເຕັມໄປດ້ວຍຄວາມກຽດຊັງ!

ພຣະທັມຢາໂກໂບບົດທີ 3 ແມ່ນບົດນຶ່ງທີ່ມີຄວາມສໍາຄັນໃນທຸກໆຂໍ້ຂອງພຣະຄັມພີທີ່ເວົ້າເຖິງຄວາມໜ້າຢ້ານກົວຂອງລີ້ນ.

## ສຶກສາພຣະຄັມພີ

**1. ພລັງອັນຍິ່ງໃຫຍ່ຂອງຄໍາເວົ້າ:** ຢາໂກໂບ 3:1-6

ໃນຫົວຂໍ້ຂື້ນຕົ້ນດ້ວຍຜູ້ທີ່ມີຄວາມຊໍານິຊໍານານໃນວິທີການໃຊ້ລີ້ນເປັນຢ່າງດີ: **ຄຣູສອນ.** ຄົນຢິວແມ່ນໃຫ້ການນັບຖືຢ່າງດີກັບຜູ້ນໍາສາສນາ(ຄຣູສອນ). ພຣະເຢຊູມັກຈະເອີ້ນວ່າຄຣູສອນຫຼືຜູ້ນໍາສາສນາ. ໃນຄຣິສ ຕະຈັກສມັຍເລີ້ມແລກ ຕໍາແນ່ງຂອງ “ສິດຍາພິບານຫຼືຄຣູສອນ” (ເອເຟໂຊ 4:11) ທີ່ຖືວ່າເປັນຕໍາແໜ່ງທີ່ສູງ.

ມີຫຼາຍຄົນປາຖນາທີ່ຈະຊອກຫາຕໍາແໜ່ງນີ້ແຕ່ຢາໂກໂບໄດ້ຕັກເຕືອນວ່າ: **ຢ່າພາກັນເປັນອາຈານກັນຈໍານວນຫຼວງຫຼາຍ.** ດ້ວຍເຫດໃດ? ພາຍຫຼັງ, ເຮັບເຣີ 5:12 ພະຍາຍາມຊັກນໍາຫຼາຍຄົນໃຫ້ສັ່ງສອນ. ດຽວນີ້ຢາໂກໂບໄດ້ຊຽນ

ວ່າກ່ອນອື່ນເຂົາຄວນພິຈາຣະນາຢ່າງໜັກເຖິງຄວາມຮັບຜິດຊອບຂອງການສິດສອນຂອງເຂົາ. ຄຳນີ້ງເຖິງອຳນາດຂອງຄຣູສອນທີ່ຈະຊ່ອຍບັນດານໃຫ້ເກີດຜົນດີຫຼືຈະນຳພາໄປສູ່ຄວາມຈິບຫາຍ. ຢາໂກໂບໄດ້ບອກໃຫ້ຄຣູສອນຮູ້ວ່າ **ພວກເຮົາຈະໄດ້ຮັບການພິພາກສາຢ່າງໜັກໜ່ວງ.** ມັດທາຍ 12:36 ເຕືອນວ່າໃນວັນພິພາກສາພວກເຮົາຈະໃຫ້ການຮັບຜິດຊອບຕໍ່ທຸກໆຄຳເວົ້າ.

ຢາໂກໂບ ຍອມຮັບວ່າ **ພວກເຮົາທຸກຄົນຕົກຢູ່ໃນຄວາມຜິດພາດຫຼາຍຢ່າງ.** ຄຳເວົ້າວ່າຜິດພາດມີຄວາມໝາຍວ່າ " ການຫລົງຜິດ." ຄວາມຜິດພາດຂອງລີ້ນສາມາດກໍ່ໃຫ້ເກີດບັນຫາໃຫຍ່. ໃນສົງຄາມໂລກຄັ້ງທີສອງມີຄຳຂວັນວ່າ "ເສັຽປາກພາໃຫ້ຫາຍຍະນະ" ເປັນຄຳເຕືອນສະຕິຂອງທະຫານອະເມຣິກາໃນການຮັກສາຄວາມລັບຕໍ່ສັດຕຣູ. ຢາໂກໂບໄດ້ສັງເກດເບິ່ງຜູ້ທີ່ບໍ່ມີຂໍ້ຕຳໜິ**ບຸກຄົນທີ່ເປັນຜູ້ໃຫຍ່ເຕັມທີ່** ແມ່ນຜູ້ທີ່ສາມາດຄວບຄຸມຕົນເອງໄດ້ໝົດທັງຕົວ---ລາວເປັນອ້າຍນ້ອງຮ່ວມບິດາ, ພຣະເຢຊູຄຣິດ. ນີ້ເປັນຂໍ້ຢືນຢັນທັງໝົດຂອງຂໍ້ພຣະຄຳນີ້ ທີ່ໄດ້ປະກາດວ່າບຸກຄົນທີ່ສາມາດຄວບຄຸມລີ້ນຂອງຕົນໄດ້ ລາວກໍສາມາດຄຸມໝົດທັງຕົວໄດ້.

ບາງຄົນເຂົ້າໃຈວ່າລີ້ນເປັນພຽງອະວັຍວະນ້ອຍໆ. ໃນຂໍ້ 3-5 ຢາໂກໂບ ໃຫ້ຄຳອະທິບາຍວ່າສິ່ງຂອງທີ່ນ້ອຍໆສາມາດຄວບຄຸມສິ່ງໃຫຍ່. ອັນທີນຶ່ງ, ທ່ານຂຽນກ່ຽວກັບ**ບັງຫຽນໃສ່ປາກມ້າ.** ອັນທີສອງ, ທ່ານຂຽນວ່າ **ໄມ້ໂທມທ້າຍເຮືອນ້ອຍໆ**ສາມາດຄວບຄຸມກຳປັ່ນໃຫຍ່ໃຫ້ໄປຖືກທິດທາງ. ອັນທີສາມ, ທ່ານຂຽນວ່າ**ໄຟໜ້ອຍດຽວ**ສາມາດໄໝ້ໄດ້ໝົດທັງປ່າ. ໃນຂໍ້ຄວາມທີ່ໜ້າສົນໃຈ: ເຖິງແມ່ນວ່າລີ້ນເປັນພາກສ່ວນອະວັຍວະນ້ອຍຂອງຮ່າງກາຍ ມັນຍັງເວົ້າອວດອ້າງເຣື່ອງໃຫຍ່ໆ.

ຢາໂກໂບໄດ້ຂຽນໄວ້ວ່າລີ້ນເປັນຄ້າຍຄືກັບໄຟ. ອັນທີນຶ່ງ, ລີ້ນເປັນເໝືອນໄຟທີ່ຢູ່ໃນທ່າມກາງຂອງອັນໃດທີ່ມັນທຳລາຍໄດ້. ມັນແມ່ນ**ຄຳເວົ້າຂອງຄຳເວົ້າທີ່ບໍ່ເປັນຄວາມຈິງ**ນັ້ນແມ່ນ**ພາກສ່ວນນຶ່ງຂອງຮ່າງກາຍເຮົາ.** ອັນທີສອງ, ລີ້ນເປັນເຫດດ່າງພ້ອຍ, ເພາະວ່າມັນ**ທຳໃຫ້ເປິເປື້ອນໄປທັງຕົວ.** ອັນທີສາມ, ລີ້ນຍັງເປັນແຫຼ່ງຕົວມານ; ແມ່ນມັນ**ໄດ້ຈຸດໄຟດ້ວຍໄຟນະຣົກ.** ຄຳເວົ້າທີ່ໃຫ້ຄຳອະທິບາຍນະຣົກແມ່ນຄຳວ່າທໍຣະມານ,ທີ່ບົ່ງບອກໃຫ້ຮູ້ວ່າໃນທີ່ນັ້ນມີໄຟໄໝ້ຢູ່ເປັນນິດເປັນສະຖານທີ່ທີ່ພິພາກສາຫຼັງຈາກຊີວິດນີ້. ຊາຕານຕົວມັນເອງ (ພໍ່ຂອງຄວາມຂີ້ຕົວະ,ໂຢຮັນ 8:44)ແມ່ນແຫລ່ງກຳເນີດຂອງລີ້ນແຫ່ງຄວາມຊົ່ວ.

## 2. <u>ທຳມະຊາດສອງຢ່າງຂອງຄຳເວົ້າ</u>: ຢາໂກໂບ. 3:7-12

ທ່ານຢາໂກໂບໄດ້ສະແດງໃຫ້ເຫັນວ່າລີ້ນເປັນສິ່ງທີ່ບໍ່ສາມາດບັງຄັບໄດ້. **-ສຳລັບສັດດ້ຽລະສານທຸກຊະນິດ--ມະນຸດຍັງສາມາດນຳມາຝຶກແອບໃຫ້ມັນຟັງຄວາມໄດ້** ເຖິງແມ່ນຄົນທີ່ດີທີ່ສຸດບາງຄັ້ງກໍປາຖນາຢາກໃຫ້ຄຳເວົ້າຂອງເຂົາທີ່ເວົ້າໄປແລ້ວນັ້ນຫວນກັບຄືນມາ. ຢາໂກໂບຍັງໄດ້ໃຫ້ຂໍ້ເພີ້ມເຕີມອີກວ່າມະນຸດເຮົາສາມາດທີ່ຈະຝຶກແອບໃຫ້ສັດຟັງຄວາມໄດ້. **ບໍ່ມີມະນຸດຄົນໃດສາມາດຝຶກແອບລີ້ນຂອງຕົນໄດ້.** ຢາໂກໂບໄດ້ສົມທຽບລີ້ນຂອງມະນຸດຄືກັບໂຕສັດທີ່ໂຫດຮ້າຍ, ໂດຍເວົ້າວ່າມັນ**ແມ່ນເປັນສິ່ງທີ່ຊົ່ວຮ້າຍ, ເຕັມດ້ວຍພິດຮ້າຍທີ່ເຮັດໃຫ້ເຖິງຕາຍ.**

ອັນທີສອງ, ຢາໂກໂບໄດ້ສະແດງໃຫ້ເຫັນວ່າລີ້ນນັ້ນເປັນຢ່າງໃດຈະຫາເອົາຄວາມແນ່ນອນຈາກລີ້ນນັ້ນບໍ່ໄດ້ເລີຍ**ພວກເຮົາໃຊ້ລີ້ນຮ້ອງສັຣເສີນພຣະເຈົ້າແຕ່ພວກເຮົາກໍໃຊ້ລີ້ນປ້ອຍດ່າມະນຸດທີ່ພຣະເຈົ້າສ້າງໄວ້.** ຄວາມບໍ່ແນ່ນອນອັນນີ້ກໍມີຢູ່ຫຼາຍເຫດຜົນ. ນຶ່ງ, ມະນຸດ**ແມ່ນຖືກສ້າງຂຶ້ນຕາມຮູບຮ່າງລັກສະນະຂອງພຣະເຈົ້າ**, ດັ່ງນັ້ນ, ມັນຈຶ່ງເປັນການຂັດແຍ່ງກັນທີ່ເຮົາຈະສັຣເສີນພຣະເຈົ້າແລະປ້ອຍດ່າມະນຸດທີ່ສ້າງຂຶ້ນມາຕາມຮູບຮ່າງລັກສະນະຂອງພຣະເຈົ້າ. ສອງ, ມັນເປັນການຂັດແຍ່ງທີ່ຈະໃຫ້ຄຳສັຣເສີນແລະຄຳປ້ອຍດ່າອອກມາຈາກປາກອັນດຽວກັນ. ໂດຍອ້າງອີງວ່າຜູ້ອ່ານນັ້ນເປັນເໝືອນກັບ**ອ້າຍນ້ອງເພິ່ນ**, ຢາໂກໂບຈົດຈຳໄດ້ວ່າຄຣິສຕຽນບາບໃນທາງນີ້, ແຕ່ເພິ່ນກໍເຕືອນຜູ້ທີ່ເຊື່ອທັງຫຼາຍວ່າຄວາມບາບອັນນີ້ບໍ່ສົມຄວນຢູ່ໃນທາງຂອງຄຣິສຕຽນ ປັດຈຸບັນນີ້ຄຣິສຕຽນກໍມີຄວາມຜິດໃນການເວົ້າ, ເຊັ່ນວ່າ ການເວົ້າສຽດສີ, ເວົ້າດູຖູ, ເວົ້າຂວັນນິນທາແລະເວົ້າຕົວະຢ່າງໜ້າຕາເສີຍ ດັ່ງນີ້ເປັນຕົ້ນ.

ເພື່ອສະແດງໃຫ້ເຫັນເຖິງຄວາມບໍ່ແນ່ນອນຂອງຄຣິສຕຽນຜູ້ທີ່ສັຣເສີນພຣະເຈົ້າ ແລະປ້ອຍດ່າຄົນອື່ນດ້ວຍລີ້ນອັນດຽວນັ້ນຢາໂກໂບໄດ້ປຽບທຽບໃສ່ທັມມະຊາດ. **ບໍ່ນໍ້າພຸຈະໃຫ້ນໍ້າຫວານແລະນໍ້າຂົມອອກມາຈາກຮູໆດຽວກັນໄດ້ຫຼື. ຕົ້ນເດື່ອເທດຈະເກີດຜົນເປັນໝາກກອກໄດ້ບໍ່, ອ້າຍນ້ອງຂອງເຮົາເອີຍ, ຫຼືວ່າເຄືອອະງຸ່ນຈະເກີດຜົນເປັນໝາກເດື່ອເທດໄດ້ຫຼື?** (ເບິ່ງມັດທາຍ. 7:16) ສາມ, ຄວາມແນ່ນອນຂອງທັມມະຊາດກໍຄືບໍ່ນໍ້າເຄັມຈະບໍ່ໃຫ້ນໍ້າຈືດໄຫຼອອກມາຈັກເທື່ອ.

ຢາໂກໂບຊີ້ໃຫ້ຄຣິສຕຽນເຫັນຢ່າງແຈ່ມແຈ້ງ: ຖ້າພວກເຮົາສັຣເສີນພຣະເຈົ້າແລະປ້ອຍດ່າມະນຸດດ້ວຍກັນ, ພວກເຮົາຂາດການຄວບຄຸມຕົນເອງ, ບໍ່ແນ່ນອນ, ແລະບໍ່ເຊື່ອຟັງພຣະເຈົ້າຜູ້ຊົງສ້າງລີ້ນໃຫ້ເຮົາ. ຢາໂກໂບໄດ້ກ່າວເຖິງຄໍາຕອບຂອງບັນຫານີ້ກ່ອນແລ້ວໃນໜັງສືເຫຼັ້ມນີ້. “ເຫດສັນນັ້ນ, ທ່ານທັງຫຼາຍຈົ່ງເລີກຈາກຄວາມຊົ່ວມົວໝອງທຸກຢ່າງແລະຄວາມຊົ່ວຮ້າຍເຫຼືອຫຼາຍ, ຈົ່ງນ້ອມໃຈຮັບເອົາພຣະທັມທີ່ປູກຝັງໄວ້ແລ້ວນັ້ນ ຊຶ່ງຈະສາມາດຊ່ວຍຈິດວິນຍານຂອງພວກທ່ານໃຫ້ພົ້ນໄດ້” (ຢາໂກໂບ. 1:21) ມີທົນທາງດຽວທີ່ຄຣິສຕຽນທັງຫຼາຍສາມາດຄວບຄຸມລີ້ນຂອງຕົນເອງໄດ້ກໍຄືທາງຂອງພຣະເຢຊູຄຣິດ, ຜູ້ທີ່ເປັນພຣະທັມທີ່ສ້າງທຸກສິ່ງ, ເພື່ອຄວບຄຸມທຸກສິ່ງຂອງພວກເຮົາ.

## 3. <u>ໃຊ້ຄໍາເວົ້າຢ່າງຖືກຕ້ອງ</u>: ຢາໂກໂບ 3:13-18

ທ່ານຢາໂກໂບຂຶ້ນຕົ້ນດ້ວຍການເຕືອນສະຕິຜູ້ທີ່ເປັນຄຣູສອນທັງຫຼາຍ ໃຫ້ລະມັດລະວັງໃນການໃຊ້ລີ້ນ, ທ່ານບອກຄຣູສອນຈົ່ງຈໍາໄວ້ອີກເມື່ອທ່ານໄດ້ຖາມໃນຂໍ້ 13 **ຜູ້ໃດເປັນຜູ້ມີສະຕິປັນຍາແລະມີຄວາມເຂົ້າໃຈໃນທ່າມກາງພວກເຈົ້າ**? ຢາໂກໂບໄດ້ເວົ້າກັບພວກຄຣູສອນທັງຫຼາຍວ່າວິທີດີທີ່ສຸດໃນການບັງຄັບລີ້ນແມ່ນໃຫ້ໃຊ້**ສະຕິປັນຍາ.**

ຢູ່ໃນພຣະທັມຄັມພີ, **ສະຕິປັນຍາ**ແມ່ນມາຈາກພຣະເຈົ້າແລະຄວາມໂງ່ບໍ່ແມ່ນມາຈາກພຣະເຈົ້າ. ເໝືອນດັ່ງໃນພຣະທັມສຸພາສິດ1:7ເວົ້າວ່າ, *“ຄວາມຢໍາເກງພຣະເຈົ້າເປັນບໍ່ເກີດຄວາມຮູ້;ຄວາມໂງ່ດູໝິ່ນ ປມາດສະຕິປັນຍາແລະບໍ່ຮັບເອົາການແນະນໍາ.”* ຢາໂກໂບໄດ້ເຕືອນຄຣູສອນວ່າຖ້າວ່າທ່ານແມ່ນຜູ້ສລາດ, ດັ່ງນັ້ນ **ກໍໃຫ້ຜູ້ນັ້ນສະແດງການປະຕິບັດຂອງຕົນດ້ວຍກິຣິຍາອັນດີມີໃຈອ່ອນສຸພາບປະກອບດ້ວຍສະຕິປັນ ຍາ.** ຢາໂກໂບໄດ້ປຽບທຽບໃຫ້ເຫັນຄວາມແຕກຕ່າງລະຫວ່າງປັນຍາຂອງໂລກແລະປັນຍາຂອງພຣະເຈົ້າຢູ່ໃນຂໍ້14-18. ຈົ່ງສັງເກດເບິ່ງໃນຂໍ້ພຣະຄໍາດັ່ງກ່າວນີ້ແລ້ວເຮົາກໍຈະເຫັນຄຸນສົມບັດອັນທີ່ດີແລະອັນທີ່ບໍ່ດີໄດ້ ທີ່ກ່ຽວກັບລີ້ນ.

ຢາໂກໂບໄດ້ບັນລະຍາຍເຖິງສະຕິປັນຍາປອມ, ອັນທີ່ທ່ານເອີ້ນວ່າ**ສະຕິປັນຍາທີ່ແທ້ຈິງ.** ໃນຂໍ້ 14 ທ່ານໄດ້ເວົ້າເຖິງການປະພຶດ. ວ່າການປະພຶດນັ້ນແມ່ນຮ່ວມຢູ່ກັບ**ໃຈເຫິງສາອັນຂົມຂື່ນແລະມັກໃຫຍ່ໃຝ່ສູງ** ສິ່ງເຫຼົ່ານີ້ກໍອອກມາຈາກລີ້ນ. ຢາໂກໂບໄດ້ຂຽນຕື່ມອີກກ່ຽວກັບລີ້ນ: **ຢ່າເວົ້າໂອ້ອວດແລະຢ່າເວົ້າຂີ້ຕົວະໃນການໝິ່ນປມາດຄວາມຈິງ.** ໃນຂໍ້ 15 ໄດ້ເວົ້າເຖິງແຫຼ່ງທີ່ມາຂອງສະຕິປັນຍາຂອງໂລກ ມັນບໍ່ໄດ້ມາຈາກພຣະເຈົ້າ, ເພາະວ່າມັນບໍ່ໄດ້ມາຈາກທາງເທິງ ແຕ່ມັນໄດ້ເລີ້ມຈາກທີ່ຕໍ່າແລະລະດັບຕໍ່າລົງໄປກວ່ານັ້ນອີກ: **ຢ່າງທັມມະດາຂອງໂລກ, ຕາມທັມມະດາຂອງຣາຄະຕັນຫາ, ທັມມະດາຂອງຄົນຊົ່ວຮ້າຍ.** ຄໍາອະທິບາຍຄໍາວ່າຣາຄະຕັນຫາແມ່ນອ້າງເຖິງຄວາມບາບທີ່ເກີດມາຈາກຄວາມຕ້ອງການຂອງເນື້ອກາຍ. ສຸດທ້າຍ, ໃນຂໍ້ 16 ໄດ້ບອກເຖິງຜົນປາກົດຂອງສະຕິປັນຍາຝ່າຍໂລກ. ແລະຜົນປາກົດນີ້ກໍຄື**ການຫວຸ້ນວາຍແລະການເຮັດຊົ່ວຮ້າຍທຸກຢ່າງ.** ພຣະເຢຊູຄຣິດເວົ້າວ່າ “ທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ” (ມັດທາຍ. 7:16).

ຕໍ່ໄປ, ຢາໂກໂບໄດ້ບັນລະຍາເຖິງສະຕິປັນຍາອັນແທ້ຈິງ. ພຶດຕິກັມຂອງສະຕິປັນຍາອັນແທ້ຈິງນັ້ນແມ່ນມີຈຸດລັກສະນະພິເສດແປດຢ່າງດ້ວຍກັນ, ເໝືອນກັນກັບທ່ານໂປໂລໄດ້ບອກເຖິງຜົນຂອງພຣະວິນຍານນັ້ນມີຢູ່ເກົ້າຢ່າງ (ຄາລາເຕັຽ. 5: 22-23) ຢາໂກໂບໄດ້ເລີ້ມຕົ້ນດ້ວຍອັນດັບນຶ່ງແລະສໍາຄັນທີ່ສຸດ: **ຄວາມບໍຣິສຸດ.** ດ້ວຍເຫດຜົນໃດຄວາມບໍຣິສຸດຈຶ່ງເປັນອັນດັບນຶ່ງ? ຖ້າວ່າຈິດໃຈຂອງທ່ານບໍຣິສຸດ ລີ້ນຂອງທ່ານກໍຈະເວົ້າໃນທໍານອງທີ່**ວ່າຄວາມສງົບສຸກ**

**ຄວາມຮັກ, ຄວາມອ່ອນສຸພາບ, ຄວາມຂັດເຄືອງໃຈ, ເຕັມໄປດ້ວຍຄວາມເມດຕາແລະເກີດຜົນດີ.** ຄວາມບໍຣິສຸດຍັງສາມາດຊ່ວຍເຮົາໃຫ້ມີການດຳລົງຊີວິດ**ໂດຍທີ່ບໍ່ມີການເລືອກໜ້າຄົນແລະການຫຼອກລວງ.**

ແຫຼ່ງກຳເນີດຂອງສະຕິປັນຍາອັນແທ້ຈິງແມ່ນ**ສະຕິປັນຍາທີ່ມາຈາກເບື້ອງເທິງ,** ຈາກພຣະເຈົ້າ. ທ້າຍສຸດ, ເພິ່ນບອກໃຫ້ສັງເກດເບິ່ງຜົນຂອງສະຕິປັນຍາອັນແທ້ຈິງ. ແນ່ນອນຢູ່ແລ້ວເຮົາຕ້ອງຫວ່ານເມັດພືດກ່ອນແລ້ວຈຶ່ງເກັບກ່ຽວຜົນຕາມພາຍຫຼັງ. ແຕ່ຢາໂກໂບໄດ້ເລີ້ມຕົ້ນເວົ້າກ່ຽວກັບຜົນທີ່ເກັບກ່ຽວ, ຫຼື**ຜົນຂອງຄວາມຊອບທັມ**, ແລະເວົ້າຕໍ່ໄປອີກວ່າມັນຕິດຕາມມາຄ້າຍຄືກັບຜົນຂອງ**ຜູ້ຫວ່ານຢ່າງສັນຕິສຸກກໍຈະໄດ້ຮັບຄວາມສັນຕິສຸກ.** ໃນຄຳເວົ້າອີກທຳນອງນຶ່ງວ່າ ພວກເຮົາຫວ່ານສິ່ງໃດພວກເຮົາກໍຮັບຜົນສິ່ງນັ້ນຕອບແທນ (ຄາລາເຕັຽ. 6:7) ຄວາມສັນຕິສຸກຄືໝາກຜົນຂອງການໃຊ້ລີ້ນຢ່າງຖືກຕ້ອງ.

## <u>ບົດຮຽນແຫ່ງຊີວິດ</u>

ຄຣູສອນແລະຜູ້ທີ່ເວົ້າມີຄວາມຮັບຜິດຊອບອັນໃຫຍ່ຫຼວງຕໍ່ລີ້ນຂອງຕົນເອງ ເພາະວ່າລີ້ນນັ້ນມີອຳນາດຊ້ອນຢູ່ພາຍໃນ ມັນສາມາດທຳລາຍຫຼືເຮັດໃຫ້ເຈັບປວດໄດ້. ເໝືອນກັບໄຟນ້ອຍດຽວກໍ່ໃຫ້ເກີດເປັນກອງໃຫຍ່, ລີ້ນມີອັນຕະຣາຍຫຼາຍ. ທຸກສິ່ງສາມາດຄວບຄຸມໄດ້ແຕ່ສຳລັບລີ້ນຂອງມະນຸດແລ້ວບໍ່ມີຄວາມສາມາດຄວບຄຸມໄດ້ເພາະມັນມີການປ່ຽນແປງຢູ່ສເມີ. ພວກເຮົາທຸກຄົນຕ້ອງການສະຕິປັນຍາຈາກພຣະເຈົ້າມາຄວບຄຸມລີ້ນຂອງເຮົາ.

ຈະຕ້ອງເຮັດແນວໃດເຮົາຈຶ່ງສາມາດຄວບຄຸມລີ້ນຂອງເຮົາໄດ້.

✪ ລີ້ນທີ່ບໍຣິສຸດນັ້ນຕ້ອງອອກມາຈາກຈິດໃຈທີ່ບໍຣິສຸດ, ດັ່ງນັ້ນຈຶ່ງສຶກສາພຣະຄຳແລະອະທິຖານທຸກວັນເພື່ອໃຫ້ເປັນຄວາມຊິນເຄີຍ, ຈົດຈຳຂໍ້ພຣະຄັມພີຢາໂກໂບ.3:17 ແລະອະທິຖານພຣະເຈົ້າຈະໃຫ້ສະຕິປັນຍາທີ່ມາຈາກເບື້ອງເທິງນັ້ນຕໍ່ຄຳເວົ້າທຸກຄຳຂອງທ່ານ.

✪ ຈົ່ງລອງເບິ່ງ, ຈົ່ງໃຊ້ທຸກສິ່ງຢ່າງທີ່ທ່ານໄດ້ຮຽນຮູ້ຢ່າງມີສະຕິແລະຄວາມຮູ້ສຶກພາຍໃນຊາວສີ່ຊົ່ວໂມງບໍ່ໃຫ້ເວົ້າສິ່ງບໍ່ດີຕໍ່ຜູ້ອື່ນ, ແຕ່ຖ້າວ່າທ່ານລະເມີດໃຫ້ປັບໃໝຕົນເອງດ້ວຍວິທີໃດວິທີນຶ່ງ.

✪ ໃຫ້ໃຊ້ຄຳເວົ້າທີ່ນ້ອຍທີ່ສຸດຕໍ່ຜູ້ທີ່ຢາກໄດ້ຍິນເຣື່ອງລາວຕ່າງໆຈາກທ່ານ.

✪ ໃຫ້ໃຊ້ຄຳເວົ້າທີ່ຫຼາຍທີ່ສຸດແຕ່ໃຫ້ເປັນຄຳເວົ້າທີ່ໜູນໃຈແລະເສີມສ້າງເຊິ່ງກັນແລະກັນ, ເມື່ອທ່ານຫາກພົບກັບຜູ້ໃດຜູ້ນຶ່ງຈົ່ງເວົ້າແຕ່ຄວາມດີຕໍ່ເຂົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.**